Minnesota Department of Health

# ການວິຈັຍເບິ່ງການຕິດຕໍ່ຂອງເຊື້ອວັນນະໂຣຄ໌

**ການວິຈັຍເບິ່ງການຕິດຕໍ່ຂອງເຊື້ອວັນນະໂຣຄ໌ ແມ່ນຫຍັງ?**
ເມື່ອບຸກຄົນນື່ງມີເຊື້ອວັນນະໂຣຄ໌ຢູ່ໃນຮ່າງກາຍ, ມັນເປັນສິ່ງສຳຄັນທີ່ຈະຕ້ອງໄດ້ວິໃຈເບິ່ງວ່າເຊື້ອໂຣກນັ້ນໄດ້ຕິດຕໍ່ລະບາດໄປຍັງຜູ້ອື່ນແລ້ວບໍ. ກະຊວງສາທາຣະນະສຸຂໄດ້ວິຈັຍເບິ່ງເຖິງເຣື່ອງ ການຕິດຕໍ່ຂອງພຍາດນີ້ ເພິ່ນເອີ້ນວ່າ ການກວດສອບຫາຄວາມຈິງຂອງການຕິດຕໍ່ລະບາດຂອງວັນນະໂຣກ.

ບຸກຄົນໃດທີ່ມີ ເຊື້ອວັນນະໂຣຄ໌ ສາມາດແຜ່ເຊື້ອໂຣກນີ້ ໄປຍັງຜູ້ອື່ນໄດ້ໂດຍງ່າຍໂດຍບໍ່ຮູ້ສຶກຕົວ, ຄົນເຫຼົ່ານັ້ນຕ້ອງໄດ້ສັກຢາ ເພື່ອປ້ອງກັນບໍ່ໃຫ້ ເກີດປ່ວຍໄຂ້.

ຂໍ້ມູນທີ່ທ່ານບອກກັບທາງແພທຂອງກະຊວງສາທາຣະນະສຸຂໃນລະຫວ່າງທີ່ເພິ່ນສອບຖາມນັ້ນຈະເກັບເປັນຄວາມລັບ.

**ເພິ່ນຈະເຮັດຫຍັງໃນລະຫວ່າງທີ່ເພິ່ນສອບຖາມເຣື່ອງການຕິດຕໍ່ລະບາດຂອງ ເຊື້ອວັນນະໂຣຄ?**
ແພທຂອງກະຊວງສາທາຣະນະສຸຂຈະຖາມທ່ານເຊັ່ນວ່າ ເມື່ອໃດທ່ານເລີ່ມເປັນ ຫຼືຮູ້ສຶກເປັນໄຂ້. ພຍາຍາມໃຫ້ຄິດທົບທວນຄືນວ່າທ່ານໄດ້ໃຊ້ເວລາຢູ່ກັບຄົນ**ທັງຫຼາຍ** ລວມທັງຄົນໃນຄອບຄົວ, ຄົນມາ ຢາມ, ເດັກນ້ອຍ, ໝູ່ເພື່ອນ, ຄົນທຳງານຮ່ວມກັນ, ແລະຜູ້ມາເຝົ້າ ເບິ່ງລູກ. ໃຫ້ຄິດທວນຄືນຫຼັງຫຼາຍໆອາທິດ, ຫຼາຍໆເດືອນໃນຄາວ ທີ່ທ່ານເລີ່ມປ່ວຍໄຂ້ຫຼືເລີ່ມໄອ. ຈາກນັ້ນແພທສາທາຣະນະສຸຂຈື່ງພໍຈະຮູ້ວ່າຈະໃຫ້ຄົນຜູ້ໄດ້ໄປຮັບການກວດເບິ່ງ ເຊື້ອວັນນະໂຣຄ.

**ຂໍ້ມູນທີ່ທ່ານບອກກັບແພທສາທາຣະນະສຸຂນັ້ນຈະເກັບເປັນ ຄວາມລັບ.**
ແພທສາທາຣະນະສຸຂຈະ**ບໍ່ເປີດເຜີຍ**ໃຫ້ຜູ້ໃດຮູ້ຊື່ຂອງທ່ານຫຼືຂໍ້ມູນທີ່ທ່ານໃຫ້ໄວ້ ເວັ້ນເສັຍແຕ່ວ່າຈະໄດ້ຮັບອະນຸຍາດຈາກທ່ານເທົ່ານັ້ນ. ນີ້ຫມາຍ ເຖິງວ່າທ່ານບອກຕາມຄວາມເປັນຈິງໃຫ້ກັບນາຍແພທ.

ນາຍແພທອາດຈະໄດ້ກວດເບິ່ງລະບົບລະບາຍອາກາດຢູ່ໃນເຮືອນຂອງທ່ານ ຫຼືບ່ອນໃດບ່ອນນື່ງທີ່ທ່ານູໃຊ້ເວລາຢູ່ເປັນສ່ວນ ຫຼາຍ. ນີ້ກໍເພື່ອຈະໄດ້ວິຈັຍເບິ່ງວ່າໃຜແດ່ທີ່ຄວນຈະໃຫ້ໄປກວດເບິ່ງ ເຊື້ອວັນນະໂຣຄ.

ນາຍແພທຈາກທາງສາທາຣະນະສຸກຈະນັດໝາຍໃຫ້ຄົນເຫຼົ່ານັ້ນໄປກວດເບິ່ງ ເຊື້ອວັນນະໂຣຄ, ແຕ່ບໍ່ໄດ້ບອກເຂົາວ່າຜູ້ໃດ ມີເຊື້ອວັນນະໂຣຄ. ບຸກຄົນໃດທີ່ຢູ່ໃກ້ທ່ານໃຊ້ເວລາຢູ່ນຳທ່ານຫຼາຍທີ່ສຸດນັ້ນຄວນຈະຕ້ອງໄປກວດເບິ່ງເປັນຜູ້ທຳອິດ.

ການຄົ້ນຄວ້າເບິ່ງການຕິດຕໍ່ຂອງ ເຊື້ອວັນນະໂຣຄຈະຕ້ອງໃຊ້ເວລາ ນາຍແພທຕ້ອງແນ່ໃຈວ່າບຸກຄົນທີ່ຈະໃຫ້ໄປກວດນັ້ນເຂົາຕ້ອງໄດ້ໄປກວດໃຫ້ມັນແລ້ວ. ຍ້ອນສາຍເຫດນີ້ ນາຍແພທຈື່ງຈະຕ້ອງໄດ້ສອບຖາມທ່ານຫຼາຍເທື່ອ. ເພິ່ນຈະຖາມທ່ານ ເປັນບາງຄຳຖາມທີ່ຕ່າງກັນໃນພາຍຫຼັງ. ທັງນີ້ກໍເພື່ອເພິ່ນຈະໄດ້ເຂົ້າໃຈຫມົດທຸກໆຂັ້ນຕອນ. **ໃຫ້ຈຳໄວ້ວ່າ, ສິ່ງທີ່ທ່ານບອກກັບນາຍແພທນັ້ນຈະ ເກັບເປັນ<u>ຄວາມລັບ</u>.**

**ເຊື້ອວັນນະໂຣຄຕິດຕໍ່ກັນໄດ້ຢ່າງໃດ?**
**ທຸກຄົນສາມາດທີ່ຈະຕິດ ເຊື້ອວັນນະໂຣຄໄດ້.** ເມື່ອບຸກຄົນໃດທີ່ປ່ວຍໄຂ້ເນື່ອງຈາກມີ ເຊື້ອວັນນະໂຣຄຢູ່ໃນປອດ ຂອງເຂົາເວລາໄອ, ຫຼືຈາມອອກມາເຊື້ອໂຣກກໍຈະແຜ່ລະບາດອອກໄປໃນອາກາດ



ຖ້າທ່ານຢູ່ໃກ້ບຸກຄົນທີ່ປ່ວຍເປັນ ເຊື້ອວັນນະໂຣຄ ທ່ານກໍຈະຫາຍໃຈເອົາເຊື້ອໂຣກຂອງ ເຂົາເຂົ້າໄປໃນປອດຂອງທ່ານ. ນີ້ແມ່ນທາງນື່ງຂອງການຕິດຕໍ່ແລະແຜ່ເຊື້ອຂອງ ເຊື້ອວັນນະໂຣຄ.

ທ່ານຈະບໍ່ຕິດ ເຊື້ອວັນນະໂຣຄຈາກການຈັບມືຫຼືຈາກເຄື່ອງນຸ່ງອາຫານ, ຖ້ວຍຊາມ, ຫຼືວັດຖຸຕ່າງໆ.

> **ມີຢາທີ່ດີໆເພື່ອປິ່ນປົວ ເຊື້ອວັນນະໂຣຄນີ້ໄດ້ ທັງເຊື້ອທີ່ມີໃນຮ່າງກາຍທີ່ບໍ່ທັນແຜ່ແລະແບບທີ່ແຜ່ຂະຍາຍ.**

**ມີຄວາມແຕກຕ່າງກັນຢ່າງໃດລະຫວ່າງ ເຊື້ອວັນນະໂຣຄທີ່ຍັງຝັງຕົວຢູ່ໃນຮ່າງກາຍທີ່ຍັງບໍ່ທັນຕິດຕໍ່ລະບາດໄດ້ເທື່ອແລະ ເຊື້ອວັນນະໂຣຄທີ່ສາມາດຕິດຕໍ່ລະບາດໄດ?**
ໃນເມື່ອ ເຊື້ອວັນນະໂຣຄເຂົ້າໄປຢູ່ໃນຮ່າງກາຍຂອງຄົນເຮົາ, ສ່ວນຫຼາຍມັນຈະ "ຝັກຕົວນອນຢູ່" ນີ້ເອີ້ນວ່າ "**latent TB infection**" ຫຼືຊື່ຫຍໍ້ວ່າ "**LTBI**." "ການຝັກຕົວນອນຢູ່"ຂອງເຊື້ອວັນນະໂຣຄມັນຍັງບໍ່ທັນເປັນພັຍຕໍ່ຮ່າງກາຍເທື່ອ ຫຼືທຳໃຫ້ທ່ານປ່ວຍໄຂ້ໄດ້ເທື່ອ. ການຝັກຕົວນອນຢູ່ຂອງເຊື້ອໂຣກ ຈະຢູ່ໄດ້ຫຼາຍປີ. ການສັກຢາເຊື້ອຢາທົດລອງທີ່ໃຕ້ຜິວໜັງເປັນວິທີ ດຽວທີ່ຈະຮູ້ໄດ້ວ່າມີ ເຊື້ອວັນນະໂຣຄຫຼືບໍ່ໃນຮ່າງກາຍຂອງທ່ານ.

**"ເຊື້ອວັນນະໂຣຄທີ່ສາມາດຕິດຕໍ່ລະບາດຜູ້ອື່ນໄດ້"** ເມື່ອເຊື້ອວັນນະໂຣຄມັນ "ຟື້ນຕົວ"ແລະເລີ່ມຂຍາຍຕົວຂື້ນ ມັນເປັນອັນຕລາຍຕໍ່ຮ່າງກາຍຂອງທ່ານ. ບຸກຄົນໃດທີ່ມີເຊື້ອ ເຊື້ອວັນນະໂຣຄ

# ການວິຈັຍເບິ່ງການຕິດຕໍ່ຂອງເຊື້ອວັນນະໂຣຄ – ໜ້າທີ 2

ປະເພດ ນີ້ຈະປ່ວຍໃຂ້ໜັກ. ອາການຂອງ ເຊື້ອວັນນະໂຣຄຈະມີອາການໄອເປັນປະຈຳ, ຈ່ອຍໂຊ, ນ້ຳໜັກລົດ, ກິນເຂົ້າບໍ່ແຊບ, ເຫື່ອອອກຕອນກາງຄືນ, ເປັນໃຂ້, ແລະເຈັບຕາມໜ້າເອິກ. ຖ້າເຊື້ອວັນນະໂຣຄຢູ່ໃນປອດຂອງເຂົາມັນສາມາດທີ່ຈະຕິດຕໍ່ລະບາດໄປຫາຜູ້ອື່ນໄດ້.

ມີປະມານ 10% ຂອງຄົນທີ່ມີ ເຊື້ອວັນນະໂຣຄທີ່ນອນຝັກຕົວຢູ່ນັ້ນ **ຟື້ນຕົວຂື້ນ**ແລະສາມາດຕິດຕໍ່ໄປຫາຜູ້ອື່ນໄດ້. ຖ້າທ່ານຫາກມີບັນຫາກັບສຸຂພາບອື່ນໆ, ການສ່ຽງເປັນໄປໄດ້ສູງ.

**ຖ້າຂ້ອຍມີ ເຊື້ອວັນນະໂຣຄສາມາດຕິດຕໍ່ໄປຫາຜູ້ອື່ນໄດ້, ຂ້ອຍຄວນປ້ອງກັນຄົນໃນຄອບຄົວແລະໝູ່ເພື່ອນໄດ້ຢ່າງໃດ?**

1. **ກິນຢາຮັກສາຕົວຕາມຄຳສັ່ງຂອງໝໍ**. ເມື່ອເວລາທ່ານເລີ່ມກິນຢາຮັກສາເຊື້ອວັນນະໂຣຄນັ້ນ, ທ່ານໝໍຍັງຈະຕ້ອງຕິດຕາມກວດເບິ່ງອີກເພື່ອຈະໄດ້ຮູ້ວ່າຢານັ້ນໄດ້ຜົນດີຊ່ຳໃດ. ເຖີງແມ່ນວ່າຢາໄດ້ຂ້າ ເຊື້ອວັນນະໂຣຄແລ້ວກໍຕາມ ແຕ່ທ່ານໝໍຍັງຕ້ອງໃຫ້ກິນຢາສືບຕໍ່ໄປ, ເພາະທ່ານຈະບໍ່ໄດ້ແຜ່ລະບາດເຊື້ອໂຣກໄປໃສ່ຜູ້ອື່ນ.
2. ເຖີງທ່ານຈະບໍ່ສາມາດແຜ່ລະບາດເຊື້ອໂຣກໄປໃສ່ຜູ້ອື່ນ **ໄດ້ກໍຕາມ ແຕ່ທຸກໆຄັ້ງທີ່ທ່ານໄອທ່ານຕ້ອງປິດປາກຂອງທ່ານດ້ວຍເຈັ້ຽສຳຮັບເຊັດໜ້າຢູ່ສເມີ.**
3. ແພທຈາກທາງສາທາຣະນະສຸຂຈະແນະນຳວິທີການຫລີກລ່ຽງການແຜ່ລະບາດ ເຊື້ອວັນນະໂຣຄໄປສູ່ຜູ້ອື່ນ.
   - ທ່ານອາດຕ້ອງຢູ່ຫ່າງອອກຈາກສຖານທີ່ສາທາຣະນະ, ບ່ອນທຳງານແລະໂຮງຮຽນ.
   - ທ່ານອາດຕ້ອງຍົກເວັ້ນຜູ້ມາຢ້ຽມຢາມທ່ານຢູ່ໃນເຮືອນ.
4. **ໃຫ້ຄວາມຮ່ວມມືກັບແພທໃນການຄົ້ນຄວ້າຫາຂໍ້ມູນຂອງເຊື້ອວັນນະໂຣຄ**. ແພທມີຄວາມຕ້ອງການຢາກໃຫ້ຄອບຄົວຂອງທ່ານມີສຸຂພາບສົມບູນດີແລະປອດພັຍຈາກການຕິດເຊື້ອວັນນະໂຣຄ.

MINNESOTA MDH DEPARTMENT OF HEALTH
Tuberculosis Prevention and Control Program
P.O. Box 64975
St. Paul, MN 55164-0975
651-201-5414
1-877-676-5414
www.health.state.mn.us/tb

**ຂ້ອຍຮູ້ຈັກຄົນຜູ້ນື່ງທີ່ມີ ເຊື້ອວັນນະໂຣຄທີ່ສາມາດຕິດຕໍ່ຜູ້ອື່ນໄດ້ ຂ້ອຍຄວນຈະເຮັດແນວໃດ?**
ຖ້າທ່ານໃຊ້ເວລາສ່ວນຫລາຍຢູ່ຮ່ວມກັບຄົນທີ່ມີ ເຊື້ອວັນນະໂຣຄທີ່ຕິດຕໍ່ລະບາດຜູ້ອື່ນໄດ້ນັ້ນ ທ່ານອາດຈະຫາຍໃຈເອົາເຊື້ອໂຣກເຂົ້າໄປໃນຮ່າງກາຍຂອງທ່ານ ມັນເປັນສິ່ງສຳຄັນທີ່ທ່ານຕ້ອງໄປກວດເບິ່ງວ່າທ່ານໄດ້ຕິດ ເຊື້ອວັນນະໂຣຄບໍ.

ນາຍແພທຈະນັດໝາຍໃຫ້ທ່ານໄປກວດຫາເບິ່ງ ເຊື້ອວັນນະໂຣຄດ້ວຍວິທີສັກເຊື້ອໂຣກຝັງໄວ້ທີ່ໄຕ້ຜີວໜັງ, ການກວດນີ້ຈະບໍ່ເສັຍ

ເງີນ.ຖ້າຜົນການກວດຂອງທ່ານ**“ບໍ່ພົບເຊື້ອ”**(ປົກກະຕິ) ນັ້ນກໍໝາຍຄວາມວ່າທ່ານບໍ່ມີເຊື້ອໂຣກປອດແຫ້ງຢູ່ໃນຮ່າງກາຍເພື່ອຄວາມແນ່ໃຈ ຫລັງຈາກນັ້ນອີກຫຼາຍອາທິດຕໍ່ມາທຸກໆຄົນຄວນກັບໄປກວດເບິ່ງອີກ.

ຖ້າຜົນການກວດຂອງທ່ານ **“ພົບເຊື້ອ”** ນັ້ນກໍໝາຍຄວາມວ່າທ່ານມີເຊື້ອໂຣກປອດແຫ້ງຢູ່ໃນຮ່າງກາຍ. ທ່ານຕ້ອງໄດ້ໄປພົບທ່ານໝໍເພື່ອສ່ອງໄຟຟ້າເພື່ອຈະໄດ້ຮູ້ວ່າ ເຊື້ອວັນນະໂຣຄທີ່ຢູ່ໃນຮ່າງກາຍນັ້ນຢູ່ໃນຣະດັບທີ່ນອນຝັກຕົວຫຼືລະດັບທີ່ຈະຕິດຕໍ່ແຜ່ເຊື້ອໂຣກໄປສູ່ຜູ້ອື່ນໄດ້ ທ່ານຕ້ອງໄດ້ກິນຢາຂ້າເຊື້ອໂຣກ.

ເດັກນ້ອຍຫຼືບຸກຄົນໃດທີ່ມີເຊື້ອ HIV ຫຼືມີບັນຫາສຸຂພາບອື່ນໆມີໂອກາດທີ່ຈະເຮັດໃຫ້ເຊື້ອໂຣກທີ່ນອນຝັກຕົວຢູ່ໃນຮ່າງກາຍນັ້ນຕື່ນຂື້ນແລະແຜ່ໄປສູ່ຜູ້ອື່ນ. ທ່ານອາດຈະຕ້ອງໄດ້ກິນຢາເຖີງແມ່ນວ່າຜົນການ ກວດນັ້ນບໍ່ພົບເຊື້ອກໍຕາມ.

ຖ້າທ່ານມີອາການຂອງ ເຊື້ອວັນນະໂຣຄຈະມີອາການໄອເປັນປະຈຳ,ຈ່ອຍໂຊ, ນ້ຳໜັກລົດ, ກິນເຂົ້າບໍ່ແຊບ, ເຮື່ອອອກຕອນກາງຄືນ, ເປັນໃຂ້ ແລະເຈັບໜ້າເອິກ. ທ່ານຄວນໄປຫາທ່ານໝໍ. ເຖີງແມ່ນວ່າຜົນການກວດນັ້ນບໍ່ພົບເຊື້ອກໍຕາມ.

**ຂ້ອຍຄວນເຮັດວິທີໃດຖ້າຜົນການກວດວ່າມີ ເຊື້ອວັນນະໂຣຄ?.**
ຖ້າທ່ານເຄີຍມີປະຫວັດມີ ເຊື້ອວັນນະໂຣຄຈາກຜົນການກວດທີ່ຜ່ານມາ ທ່ານກໍບໍ່ຈຳເປັນຕ້ອງກວດອີກ ຖ້າທ່ານຍັງບໍ່ທັນໄດ້ກວດ, ຈົ່ງໄປກວດ, ການກວດນີ້ເປັນຜົນດີບໍ່ໄດ້ເສັຍຫາຍຫຍັງ.

**ເຊື້ອຢາວັກຊີນBCG vaccine ແມ່ນຫັຍງ?**
ເຊື້ອຢາວັກຊີນBCG ບໍ່ໄດ້ປ້ອງກັນທ່ານຈາກເຊື້ອໂຣກປອດແຫ້ງຕລອດໄປ. ເຊື້ອຢາວັກຊີນBCGຈະບໍ່ໃຫ້ກໍ່ເກີດເຊື້ອໂຣກປອດແຫ້ງດ້ວຍວິທີສັກເຊື້ອໂຣກຝັງໃວ້ທີ່ໄຕ້ຜີວໜັງ, ຖ້າທ່ານໄດ້ສັກຢາວັກຊີນແລ້ວກໍຖືວ່າປອດພັຍ